# ສຸກສັນວັນປີໃໝ່

໑- ວັນນີ້ ວັນດີປີໃໝ່
ເຮົາມາອວຍໄຊ ໃຫ້ສຸກສຳຣານ
ມາສ້າງແດນນີ້ ໃຫ້ເປັນແດນສວັນ (ຊ້ຳ)
ມາຟ້ອນລຳກັນ ສລອງວັນປີໃໝ່ ...

໒- ຄວາມທຸກ ທີ່ເຄີຍປຣະສົບ
ຈົ່ງຢ່າໄດ້ພົບຜ່ານ ອີກຕໍ່ໄປ
ໝົດສິ້ນໄປເສັຽ ສິ່ງທີ່ເສົ້າໝອງໃຈ (ຊ້ຳ)
ຄວາມສີວິໄລ ຈົ່ງໄດ້ມາແທນທີ່ .

*/ *ເຮຮາຫົວຍິ້ມ... ເພື່ອນເອີຍ*
*ຢ່າໂສກໄປເລີຍ ຄັ້ງດຽວນຶ່ງປີ*
*ວັນນີ້ ໂຊກງາມຍາມດີ (ຊ້ຳ)*
*ເຮົາມາສວັດດີ ສວັດດີປີໃໝ່ ...*

໓- ຫາກໃຜ ເຈັບຊ້ຳອົມຂື່ນ
ໂປຣດຈົ່ງຄາຍຄືນ ຊື່ນສຸກຕໍ່ໄປ
ຫາກໃຜສຸກແລ້ວ ກໍຢ່າແຄ້ວຄາດໄປ (ຊ້ຳ)
ເຮົາຂໍອວຍໄຊ ໃຫ້ທຸກທ່ານໂຊກດີ .